**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ

ກົມອາຊຽນ ເລກທີ: 840 /ອຊ

ນະຄອນຫລວງວຽງຈັນ, ວັນທີ 20 ພະຈິກ 2023

# ໜັງສືແຈ້ງເຊີນການປະມູນສົມທຽບລາຄາ

<u>**ເຖິງ**</u>: ບັນດາບໍລິສັດອອກແບບ ແລະ ຜະລິດເຄື່ອງໃຊ້ຫ້ອງການ

<u>**ເລື່ອງ**</u>: ເຊີນເຂົ້າຮ່ວມຍື່ນຊອງປະມູນສໍາລັບການອອກແບບ ແລະ ຜະລິດເຂັມຂັດເອີກສໍາລັບປະມຸກລັດ/ຫົວໜ້າລັດຖະບານ, ບັນດາລັດຖະມົນຕີ ຂອງ 3 ເສົາຄໍ້າ ແລະ ເຈົ້າໜ້າທີ່ອາວຸໂສອາຊຽນຂອງ 3 ເສົາຄໍ້າ/ຜູ້ຕາງໜ້າຖາວອນ ປະຈໍາ ອາຊຽນ/ ຫົວໜ້າກົມອາຊຽນ ເຂົ້າຮ່ວມກອງປະຊຸມອາຊຽນ ທີ່ຈະຈັດ ຢູ່ ສປປ ລາວ ໃນປີ 2024.

- ອີງຕາມການເຫັນດີຂອງຄະນະນໍາກະຊວງການຕ່າງປະເທດ ລົງວັນທີ 30 ຕຸລາ 2023 ກ່ຽວກັບການເລີ່ມຂະບວນຈັດຊື້-ຈັດຈ້າງບາງໜ້າວຽກຮີບດ່ວນ ເພື່ອກະກຽມເປັນເຈົ້າພາບ ແລະ ປະທານອາຊຽນຂອງ ສປປ ລາວ ໃນປີ 2024.

ກົມອາຊຽນ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີຄວາມສາມາດ ແລະ ມີປະສົບປະການດ້ານການອອກແບບ ແລະ ຜະລິດເຂັມຂັດເອີກ ເຂົ້າຮ່ວມການປະມູນສົມທຽບລາຄາສໍາລັບການອອກແບບ ແລະ ຜະລິດເຂັມຂັດເອີກສໍາລັບປະມຸກລັດ/ຫົວໜ້າລັດຖະບານ, ບັນດາລັດຖະມົນຕີ ຂອງ 3 ເສົາຄໍ້າ ແລະ ເຈົ້າໜ້າທີ່ອາວຸໂສອາຊຽນຂອງ 3 ເສົາຄໍ້າ/ຜູ້ຕາງໜ້າຖາວອນ ປະຈໍາ ອາຊຽນ/ຫົວໜ້າກົມອາຊຽນ ທີ່ຈະເຂົ້າຮ່ວມກອງປະຊຸມອາຊຽນ ຈັດຢູ່ ສປປ ລາວ ໃນປີ 2024 ເພື່ອໃຫ້ສາມາດເລີ່ມນໍາໃຊ້ການເປັນປະທານອາຊຽນຂອງ ສປປ ລາວ ໃນເດືອນ ມັງກອນ 2024 ເປັນຕົ້ນໄປ.

ການປະມູນຈະດໍາເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມຊໍານານ ແລະ ສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມອາຊຽນ, ກະຊວງການຕ່າງປະເທດ ໂຮງລັດຖະການ (ຊັ້ນ 4, ຕຶກ B, ໂທລະສັບ: 021-415109) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ.

ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ເລີ່ມແຕ່ວັນທີ 20 ພະຈິກ 2023 ເປັນຕົ້ນໄປ, ໃນລາຄາ 2,000,000 ກີບ (ສາມລ້ານກີບ) ສໍາລັບການປະມູນ ແລະ ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ຊອງປະມູນຕ້ອງສົ່ງໃຫ້ກົມອາຊຽນ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 10:00 ໂມງ ຂອງວັນທີ 11 ທັນວາ 2023. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດ ໃນເວລາ 10:30 ໂມງ ຂອງວັນທີ 11 ທັນວາ 2023 ທີ່ ຫ້ອງປະຊຸມກົມອາຊຽນ ຊັ້ນ 4, ຕຶກ B, ກະຊວງການຕ່າງປະເທດ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.

ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນ ຫລື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

ຫົວໜ້າກົມ

ຈາຕຸລົງ ບົວສີສະຫວັດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການຕ່າງປະເທດ
ກົມອາຊຽນ

ເລກທີ: 839 /ອຊ

ນະຄອນຫລວງວຽງຈັນ, ວັນທີ 20 ພະຈິກ2023

## ເງື່ອນໄຂ ແລະ ຄຳແນະນຳສຳລັບຜູ້ເຂົ້າຮ່ວມປະມູນສິນທຽບລາຄາ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນການອອກແບບ ແລະ ຜະລິດເຂັມຂັດເອີກສຳລັບປະມຸກລັດ/ຫົວໜ້າລັດຖະບານ, ບັນດາລັດຖະມົນຕີ ຂອງ 3 ເສົາຄ້ຳ ແລະ ເຈົ້າໜ້າທີ່ອາວຸໂສອາຊຽນຂອງ 3 ເສົາຄ້ຳ/ຜູ້ຕາງໜ້າຖາວອນປະຈຳ ອາຊຽນ/ຫົວໜ້າກົມອາຊຽນ ທີ່ຈະເຂົ້າຮ່ວມກອງປະຊຸມອາຊຽນ ຈັດຢູ່ ສປປ ລາວ ໃນປີ 2024 ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

**<u>ເງື່ອນໄຂທົ່ວໄປ</u>**

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ;
2. ຕ້ອງມີໃບອະນຸຍາດດຳເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊຳລະອາກອນທີ່ໃຊ້ໄດ້ເຖິງສົກປີ 2023;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ;
5. ຕ້ອງມີໃບຢັ້ງຢືນຖານະທາງການເງິນຂອງບໍລິສັດ 300 ລ້ານກີບ ຂຶ້ນໄປ ພາຍໃນ 01 ປີ. (ຢັ້ງຢືນບັນຊີສຳຮອງຈາກທະນາຄານ);
6. ຕ້ອງມີເງິນຄ້ຳຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
7. ບໍລິສັດຕ້ອງມີຄວາມສາມາດ ແລະ ປະສົບການດ້ານນີ້ ຫຼື ປະສົບການວຽກທີ່ຄ້າຍຄືກັນນີ້ມາກ່ອນ ຢ່າງໜ້ອຍ 02 ປີ;
8. ບໍລິສັດຕ້ອງອອກແບບ ແລະ ຜະລິດເຂັມຂັດເອີກສຳລັບປະມຸກລັດ/ຫົວໜ້າລັດຖະບານ, ບັນດາລັດຖະມົນຕີ ຂອງ 3 ເສົາຄ້ຳ ແລະ ເຈົ້າໜ້າທີ່ອາວຸໂສອາຊຽນຂອງ 3 ເສົາຄ້ຳ/ຜູ້ຕາງໜ້າຖາວອນ ປະຈຳ ອາຊຽນ/ ຫົວໜ້າກົມອາຊຽນ ທີ່ຈະເຂົ້າຮ່ວມກອງປະຊຸມອາຊຽນ ຈັດຢູ່ ສປປ ລາວ ໃນປີ 2024 ໂດຍໃຫ້ມີກາໝາຍປະທານອາຊຽນຂອງ ສປປ ລາວ ແລະ ຕ້ອງສຳເລັດກ່ອນວັນທີ 30 ທັນວາ 2023 ຫຼັງຈາກເຊັນສັນຍາ;
9. ຊອງປະມູນຕ້ອງແຍກອອກເປັນ 02 ຊອງ ຄື: 1. ຊອງເຕັກນິກ ແລະ 2 ຊອງລາຄາ (ກາແດງ 01 ຊຸດ ແລະ ກອບປີ້ 01 ຊຸດ).
10. ຕ້ອງເປັນບໍລິສັດທີ່ບໍ່ຖືກດຳເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂ ແນະນຳຜູ່ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

**ຫົວໜ້າກົມ**

**ຈາຕຸລົງ ບົວສີສະຫວັດ**